ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ອຸດສາຫະກຳ ແລະ ການຄ້າ

ກົມຄຸ້ມຄອງຊັບສິນທາງປັນຍາ

ເລກທີ 702 /ກຊປ

ນະຄອນຫຼວງວຽງຈັນ, ວັນທີ 15 ກໍລະກົດ 2025

ໃບແຈ້ງການ

ເຖິງ: Dolby Laboratories Licensing Corporation

(ໂດຍຜ່ານ ACTIP (LAO) IP CO., LTD)

ເລື່ອງ: ການຊຳລະຄ່າທຳນຽມ ແລະ ຄ່າບໍລິການ ເພື່ອອອກໃບຢັ້ງຢືນສິດທິບັດ

- ອີງຕາມ ລັດຖະບັນຍັດຂອງປະທານປະເທດ ແຫ່ງ ສປປ ລາວ ວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ, ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021;
- ອີງຕາມ ກົດໝາຍວ່າດ້ວຍຊັບສິນທາງປັນຍາ ເລກທີ 50/ສພຊ, ລົງວັນທີ 20 ພະຈິກ 2023;
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ສິດທິບັດ ແລະ ອະນຸສິດທິບັດ ເລກທີ 0434/ອຄ, ລົງວັນທີ 30 ມິນາ 2023;
- ອີງຕາມ ສິດທິບັດທີ່ອອກໂດຍສຳນັກງານຊັບສິນທາງປັນຍາ ສິງກະໂປ ເລກທີ SG 10202300347 X, ລົງວັນທີ 30 ມັງກອນ 2024.

ກົມຊັບສິນທາງປັນຍາ ມີຄວາມຍິນດີແຈ້ງມາຍັງທ່ານຊາບວ່າ: ການປະດິດສ້າງຍື່ນພາຍໃຕ້ຄຳຮ້ອງ ເລກທີ: PT 958, ວັນທີຍື່ນຄຳຮ້ອງ: 21 ມິຖຸນາ 2024. ຫົວຂໍ້ການປະດິດສ້າງ SOURCE COLOR VOLUME INFORMATION MESSAGING. ແມ່ນສອດຄ່ອງຕາມເງື່ອນໄຂທີ່ສາມາດໄດ້ຮັບສິດທິບັດ. ສະນັ້ນ, ຈຶ່ງແຈ້ງໃຫ້ຜູ້ຮ້ອງຂໍຊຳລະຄ່າທຳນຽມ ແລະ ຄ່າບໍລິການ ດັ່ງນີ້:

1. ຄ່າທຳນຽມການອອກໃບຢັ້ງຢືນສິດທິບັດ:	**1.000.000 ກີບ**	**(1)**
2. ຄ່າປະກາດເຜີຍແຜ່ການປະດິດສ້າງຫລັງໄດ້ຮັບໃບຢັ້ງຢືນສິດທິບັດ:	**400.000 ກີບ**	**(2)**
3. ຄ່າທຳນຽມ ແລະ ຄ່າບໍລິການ ຮັກສາອາຍຸການ ສິດທິບັດ:	**2.500.000 ກີບ**	**(3)**

- ປີທີ 7 (2024): 350.000 + 400.000 = 750.000
- ປີທີ 8 (2025): 400.000 + 400.000 = 800.000
- ປີທີ 9 (2026): 550.000 + 400.000 = 950.000

➢ **ລວມຈຳນວນເງິນທັງໝົດທີ່ຕ້ອງຈ່າຍ: (1)+(2)+(3) = 3.900.000 ກີບ (ສາມລ້ານເກົ້າແສນກີບຖ້ວນ)**

ໃນກໍລະນີທີ່ຜູ້ຮ້ອງຂໍ ບໍ່ສາມາດມາຊຳລະ ຄ່າທຳນຽມ ແລະ ຄ່າບໍລິການ ພາຍໃນກຳນົດ 60 ວັນ, ນັບແຕ່ ວັນທີລົງລາຍເຊັນຂອງແຈ້ງການສະບັບນີ້, ການອອກສິດທິບັດດັ່ງກ່າວ ຈະຖືກຍົກເລີກ ແລະ ຖືເປັນໂມຄະ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຊຳລະ ຄ່າທຳນຽມ ແລະ ຄ່າບໍລິການ ຕາມທີ່ກຳນົດດ້ວຍ.

ຮອງຫົວໜ້າກົມ

ບ່ອນນຳສົ່ງ:
- ພະແນກສັ່ງລວມ 1 ສະບັບ
- ບໍລິສັດຜູ້ຕາງໜ້າ 1 ສະບັບ
- ເກັບມ້ຽນ 1 ສະບັບ

ກະຊວງອຸດສາຫະກຳ ແລະ ການຄ້າ ກົມຊັບສິນທາງປັນຍາ

ໄຊບັນດິດ ໄຊຍະວົງຄຳດີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພະແນກສິດທິບັດ

ບົດລາຍງານ
ຜົນການກວດສອບເນື້ອໃນ/ອ່ານຜົນການກວດສອບ

I. ຄຳຮ້ອງ	ເລກທີຄຳຮ້ອງ:	PT 958
	ວັນທີຍື່ນຄຳຮ້ອງ:	21/06/2024
	ຜູ້ຍື່ນຄຳຮ້ອງ:	Dolby Laboratories Licensing Corporation
	ຫົວຂໍ້:	SOURCE COLOR VOLUME INFORMATION MESSAGING
	ປະເພດຄຳຮ້ອງ:	Paris Convention

II. ຄຳເຫັນຂອງຜູ້ກວດສອບ

1. ຄຳເຫັນ

ຜ່ານການກວດສອບຄຳຮ້ອງດັ່ງກ່າວເຫັນວ່າ ຂໍ້ຮຽກຮ້ອງສິດທີ່ໄດ້ຍື່ນມານັ້ນ ສອດຄ່ອງກັບເງື່ອນໄຂທີ່ສາມາດໄດ້ຮັບສິດທິບັດ ທີ່ອອກໂດຍ ສຳນັກງານຊັບສິນທາງປັນຍາ ສິງກະໂປ ດັ່ງທີ່ໄດ້ລະບຸຢູ່ໃນ ຂໍ້ 2 ລຸ່ມນີ້.

2. ເອກະສານອ້າງອີງ (ເອກະສານໄດ້ຄົ້ນຕິດມາພ້ອມນີ້)

SG 10202300347 X

3. ຈຳນວນຂໍ້ຮຽກຮ້ອງສິດ

4 ຂໍ້

ວັນທີ 1.7.2025
ຜູ້ກວດສອບ

ຢ້ອງສະ-ວ໊ຽນ

III. ຄຳເຫັນຂອງຫົວໜ້າພະແນກສິດທິບັດ

.....ເຫັນດີຕາມຜົນການກວດສອບ.....

.....

ນະຄອນຫຼວງວຽງຈັນ, ວັນທີ 11/7/2025
ລາຍເຊັນ

ສໍລະສິນ ແສງສີລາວົງ